**ບົດຄວາມຂອງພຣະສັນຕະປາປາຟັງຊິສໂກ**
**ສໍາລັບກໍານົດບໍາເພັນສິນປີ 2020**

**ຫົວຂໍ້: "ພວກເຮົາວອນຂໍພວກພີ່ນ້ອງໃນນາມຂອງພຣະກຣິສໂຕເຈົ້າ ຈົ່ງຄືນດີກັບພຣະເຈົ້າເຖີດ" (2 ກຣ 5, 20).**

ພີ່ນ້ອງທີ່ຮັກແພງ,

ເປັນໂອກາດດີອີກຄັ້ງໜຶ່ງສໍາລັບປີນີ້ທີ່ພຣະເຈົ້າໄດ້ປະທານໃຫ້ພວກເຮົາມີເວລາທີ່ເໝາະສົມສໍາລັບລື້ຟື້ນຈິດໃຈຄືນໃໝ່ ເພື່ອຕຽມສະຫລອງທໍາລໍ້າເລີກອັນຍິ່ງໃຫຍ່ແຫ່ງການຕາຍແລະການກັບເປັນຄືນມາຂອງພຣະເຢຊູກຣິສໂຕເຈົ້າ, ຜູ້ເປັນສີລາຫົວມູມໃນຊີວິດກຣິສຕະຊົນແຕ່ລະຄົນຂອງພວກເຮົາແລະໝູ່ຄະນະ. ເປັນການສົມຄວນທີ່ຈະກັບຄືນມາຫາທໍາລໍ້າເລີກນີ້ຢູ່ສະເໝີດ້ວຍໝົດຈິດໃຈ. ເພາະທໍາລໍ້າເລີກນີ້ຈະເຕີບໃຫຍ່ຂຶ້ນໄດ້ໃນຕົວພວກເຮົາໄດ້ ກໍຕໍ່ເມື່ອພວກເຮົາຍອມໃຫ້ທໍາລໍ້າເລີກນີ້ນໍາພາພວກເຮົາບົນເສັ້ນທາງແຫ່ງຄວາມເຊື່ອ ເພື່ອຈະສາມາດຕອບຮັບສຽງຮຽກເອີ້ນຂອງພຣະເຈົ້າດ້ວຍຄວາມສະໝັກເຕັມໃຈ.

**1) ທໍາລໍ້າເລີກປາສກາ, ຮາກຖານແຫ່ງການກັບຈິດປ່ຽນໃຈ**

ຄວາມປິຕິຍິນດີຂອງຊີວິດກຣິສຕະຊົນມາຈາກການຟັງແລະການຮັບຕ້ອນຂ່າວດີແຫ່ງການຕາຍແລະການກັບເປັນຄືນມາຂອງພຣະເຢຊູເຈົ້າ ອັນແມ່ນ kerygme ແປວ່າ: ແກ່ນສານແຫ່ງຄວາມເຊື່ອ. ໃນແກ່ນສານແຫ່ງຄວາມເຊື່ອນີ້ໄດ້ຮວບຮວມທໍາລໍ້າເລີກແຫ່ງຮັກທີ່ "ແທ້ຈິງ, ຖືກຕ້ອງແລະເປັນຈິງຜ່ານຄວາມສໍາພັນໃນການປາກເວົ້າຢ່າງຈິງໃຈແລະເກີດຜົນ" (ສົມມະນາສານ: ພຣະກຣິສໂຕຜູ້ຊົງຊີວິດ (Christus vivit) ຂໍ້ 117). ສໍາລັບຜູ້ທີ່ເຊື່ອໃນຂ່າວດີນີ້ຈະປະຖິ້ມຄວາມເທັດທີ່ມີຢູ່ໃນຕົວຂອງເຂົາ. ເພາະຂ່າວດີນີ້ນໍາມາໃຫ້ພວກເຮົາຊຶ່ງຄວາມຮັກຂອງພຣະບິດາແລະນໍ້າພຣະໄທຂອງພຣະອົງອັນແມ່ນການມອບຊີວິດຂອງພຣະເຢຊູເຈົ້າເພື່ອໃຫ້ເກີດໝາກຜົນ (ຢຮ 10, 10). ກົງກັນຂ້າມ, ຖ້າພວກເຮົາຟັງສຽງຈອມປອມຂອງ "ເຈົ້າພໍ່ແຫ່ງການຕົວະຫລອກ" (ຢຮ 8, 45) ພວກເຮົາຈະຈົມຢູ່ໃນຂຸມຂອງການບໍ່ມີສາລະແລະມີຊີວິດໃນໄຟນະລົກຕັ້ງແຕ່ຢູ່ໃນໂລກນີ້ແລ້ວ. ດັ່ງທີ່ຫລາຍໆຄົນໄດ້ປະສົບພົບພໍ້ແລະມີປະສົບການໃນເຫດການທີ່ໜ້າຢ້ານກົວໃນຊີວິດສ່ວນຕົວກໍຄືໝູ່ຄະນະ.

ໃນກໍານົດບໍາເພັນສິນປີ 2020 ນີ້, ຂ້າພະເຈົ້າປາດຖະໜາຢາກເຜີຍແຜ່ໃຫ້ກຣິສຕະຊົນທຸກຄົນຮູ້ເຖິງຂໍ້ຄວາມທີ່ຂ້າພະເຈົ້າໄດ້ຂຽນຫາພວກໜຸ່ມໃນສົມມະນາສານ: ພຣະກຣິສຜູ້ຊົງຊີວິດ (Christus vivit) ວ່າ: "ຈົ່ງແນມເບິ່ງພຣະຫັດທີ່ເປີດກວ້າງຂອງພຣະເຢຊູເຈົ້າຜູ້ຖືກຄຶງກາງເຂນ ແລະໃຫ້ພຣະອົງໄຖ່ກູ້ເຈົ້າເລື້ອຍໆແລະສະເໝີໄປ. ເມື່ອເຈົ້າຫຍັບເຂົ້າຫາພຣະອົງເພື່ອສາລະພາບບາບຜິດຂອງເຈົ້າ, ຈົ່ງເຊື່ອຢ່າງຈິງໃຈວ່າພຣະອົງຈະປົດປ່ອຍເຈົ້າອອກຈາກບາບໂທດທຸກຢ່າງດ້ວຍອາໄສພຣະເມດຕາກະລຸນາຂອງພຣະອົງ. ຈົ່ງເພັ່ງຊົມພຣະໂລຫິດຂອງພຣະອົງທີ່ໄຫລຫລັ່ງອອກມາຍ້ອນຄວາມຮັກ, ຈົ່ງໃຫ້ພຣະໂລຫິດຂອງພຣະອົງສໍາລະລ້າງເຈົ້າ. ດັ່ງນີ້, ເຈົ້າຈະສາມາດເກີດໃໝ່ອີກຄັ້ງໜຶ່ງ" (ສົມມະນາສານ: ພຣະກຣິສໂຕຜູ້ຊົງຊີວິດ (Christus vivit) ຂໍ້ 123). ປາສກາຂອງພຣະເຢຊູເຈົ້າບໍ່ແມ່ນເຫດການໃນອາດີດ. ອາໄສລິດອໍານາດຂອງພຣະຈິດເຈົ້າ ປາສກາຂອງພຣະເຢຊູເຈົ້າຈຶ່ງເປັນປັດຈຸບັນຢູ່ສະເໝີ. ທໍາລໍ້າເລີກນີ້ທໍາໃຫ້ພວກເຮົາສາມາດເຫັນແລະຈັບບາຍພຣະກາຍຂອງພຣະເຢຊູເຈົ້າໄດ້ດ້ວຍຄວາມເຊື່ອຜ່ານທາງຜູ້ທີ່ເຈັບປວດທໍລະມານ.

**2) ຄວາມຮີບດ່ວນຂອງການກັບຈິດປ່ຽນໃຈ**

ເມື່ອພວກເຮົາເພິ່ງຊົມເພື່ອເຂົ້າເຖິງທຳລ້ຳເລີກປາສກາຈະທຳໃຫ້ພວກເຮົາໄດ້ຮອດ. ເພາະອາໄສທຳລ້ຳເລີກນີ້ພຣະເຈົ້າໄດ້ປະທານພຣະເມດຕາກະລຸນາຂອງພຣະອົງໃຫ້ພວກເຮົາ. ປະສົບການໃນພຣະເມດຕາຂອງພຣະເຈົ້າຈະເປັນຈິງໄດ້ ກໍຕໍ່ເມື່ອພວກເຮົາພົບພໍ້ກັບພຣະເຢຊູເຈົ້າຜູ້ຖືກຄຶງກາງເຂນແລະກັບຄືນຊີບ "ໜ້າຕໍ່ໜ້າ". "ຜູ້ຊຶ່ງໄດ້ຮັກພວກເຮົາແລະໄດ້ມອບຊີວິດເພື່ອພວກເຮົາ" (ກລ 2, 20). ເປັນການປາກເວົ້າລະຫວ່າງໃຈກັບໃຈ, ແລະເປັນການໂອ້ລົມຢ່າງໝູ່ເພື່ອນ. ເພາະສະນັ້ນ, ຄຳພາວະນາຈຶ່ງເປັນສິ່ງສຳຄັນໃນກຳນົດບຳເພັນສິນນີ້. ກ່ອນທີ່ຄຳພາວະນາຈະກາຍເປັນຂໍ້ບັງຄັບ, ຄຳພາວະນານີ້ໄດ້ສະແດງໃຫ້ພວກເຮົາເຫັນເຖິງຄວາມຮັກຂອງພຣະເຈົ້າທີ່ໄດ້ຮັກພວກເຮົາກ່ອນແລະຍັງຈະຮັກພວກເຮົາຢູ່ສະເໝີ. ກຣິສຕະຊົນສວດພາວະນາເພາະເຂົາສຳນຶກໄດ້ວ່າພຣະເຈົ້າໄດ້ຮັກເຂົາເຖິງວ່າເຂົາຈະບໍ່ສັດຊື່ຕໍ່ພຣະອົງ. ຄຳພາວະນາມີຫລາຍຮູບແບບ, ແຕ່ສິ່ງທີ່ສຳຄັນທີ່ສຸດຕໍ່ໜ້າພຣະເຈົ້າຄືຄຳພາວະນາສາມາດຊຶມຊາບເຂົ້າໃນຈິດໃຈທີ່ແຂງກະດ້າງຂອງພວກເຮົາ ເພື່ອທຳໃຫ້ພວກເຮົາຫັນມາຫາພຣະອົງແລະພຣະປະສົງຂອງພຣະອົງ.

ໃນຊ່ວງເວລາອັນເໝາະສົມນີ້, ຈົ່ງໃຫ້ພຣະເຈົ້ານຳພາພວກເຮົາເໝືອນດັ່ງພຣະອົງໄດ້ນຳພາຊົນຊາດອິສຣາແອນເຂົ້າໃນທີ່ປ່ຽວ (ຮຊອ 2, 16). ເພື່ອພວກເຮົາຈະສາມາດຟັງສຽງຂອງພຣະສາວາມີ ເພື່ອພຣະສຸລະສຽງນີ້ຈະໄດ້ດັງກ້ອງໃນສ່ວນເລິກຈິດໃຈແລະໃນເສລີພາບຂອງພວກເຮົາ. ຍິ່ງພວກເຮົາປ່ອຍໃຫ້ວາຈາພຣະເຈົ້າກະທຳໃນຈິດໃຈຂອງພວກເຮົາ, ຍິ່ງພວກເຮົາສາມາດປະສົບພົບພໍ້ກັບພຣະເມດຕາຂອງພຣະອົງສຳລັບພວກເຮົາ. ຈົ່ງຢ່າປະປ່ອຍໃຫ້ກຳນົດເວລາແຫ່ງພຣະຄຸນນີ້ສູນເສຍໄປໂດຍບໍ່ໄດ້ຮັບປະໂຫຍດ. ແລະຢ່າຄິດວ່າຕົວເອງຍັງມີເວລາແລະມີວິທີໃນການຄືນມາຫາພຣະເຈົ້າ.

**3) ນ້ຳພຣະໄທທາທີ່ສຸດບໍ່ໄດ້ຂອງພຣະເຈົ້າໃນການປາກເວົ້າກັບລູກຂອງພຣະອົງ**

ໃນການທີ່ພຣະເຈົ້າປະທານໃຫ້ພວກເຮົາມີໂອກາດອັນເໝາະສົມອີກຄັ້ງເພື່ອກັບຈິດປ່ຽນໃຈນີ້, ຈົ່ງຢ່າຖືເບົາ. ແຕ່ໂອກາດອັນປະເສີດນີ້ຄວນເປັນສິ່ງທີ່ປຸກລຸກຈິດໃຈພວກເຮົາເຖິງພຣະຄຸນ ອັນຈະທຳພວກເຮົາໃຫ້ຕື່ນຈາກຄວາມເມີນເສີຍ. ເຖິງວ່າພວກເຮົາຈະມີສະຕິ, ແຕ່ບາງຄັ້ງກໍເກີດບັນຫາໃນຊີວິດຂອງພວກເຮົາກໍຄືໃນພຣະກຣິສຕະຈັກແລະໃນໂລກນີ້ດ້ວຍ. ສິ່ງນີ້ອາດເປັນເຄື່ອງໝາຍສະແດງເຖິງການຕັກເຕືອນຂອງພຣະເຈົ້າ. ແລະໃນເວລາດຽວກັນພຣະອົງກໍຢາກບອກພວກເຮົາວ່າພຣະອົງບໍ່ຢາກໃຫ້ພວກເຮົາຕ້ອງຖືກຕັດຂາດຈາກຄວາມຮອດ. ພຣະເຢຊູເຈົ້າຜູ້ຖືກຄຶງກາງເຂນ, "ພຣະອົງມີສະພາບເປັນຄົນບາບຍ້ອນເຮົາ" (2 ກຣ 5, 21). ພຣະປະສົງຂອງພຣະເຈົ້າຊຶ່ງສະແດງອອກໃນທີ່ນີ້ຄືທຳໃຫ້ບາບໂທດທັງໝົດຂອງພວກເຮົາຕົກໃສ່ພຣະບຸດຂອງພຣະອົງ ແລະທຳໃຫ້ພຣະເຢຊູເຈົ້າຕ້ອງສະລະຄວາມເປັນພຣະເຈົ້າຂອງພຣະອົງເພື່ອພວກເຮົາ. ດັ່ງທີ່ພຣະສັນຕະປາປາເບເນດິກໂຕທີສິບຫົກໄດ້ກ່າວໃນສົມມະນາສານ: ພຣະເຈົ້າເປັນຄວາມຮັກ (Deus caritas est) ຂໍ້ 12). ເພາະພຣະເຈົ້າຮັກຜູ້ທີ່ເປັນສັດຕູຂອງພຣະອົງ (ມທ 5, 43-48).

ຄຳປາກເວົ້າຂອງພຣະເຈົ້າຜ່ານທາງປາສກາຂອງພຣະບຸດພຣະອົງທຳໃຫ້ພວກເຮົາບໍ່ເປັນເໝືອນປະຊາກອນຂອງອາແຕນ (Athènes) ທີ່ມີເວລາເພື່ອການໂອ້ລົມແລະຟັງສິ່ງທີ່ເປັນມາໃນໂລກ (ກຈ 17, 21). ຄົນທີ່ເວົ້າຫລາຍແລະມີຄວາມສົນໃຈໃນສິ່ງທີ່ບໍ່ມີປະໂຫຍດແລະງົມງວາຍອັນແມ່ນກະແສຂອງໂລກໃນທຸກຍຸກສະໄໝ. ໃນຍຸກຂອງພວກເຮົາກໍເຊັ່ນດຽວກັນສິ່ງນີ້ອາດທຳໃຫ້ພວກເຮົາເຂົ້າໃຈຜິດໃນດ້ານການສື່ສານປະຈຳວັນ.

**4) ຄວາມຮັ່ງມີເພື່ອການແບ່ງປັນບໍ່ແມ່ນຮັກສາໄວ້ເພື່ອຕົວເອງ**

ຈົ່ງໃຫ້ທຳລ້ຳເລີກປາສກາເປັນຈຸດໃຈກາງຂອງຊີວິດ ໝາຍເຖິງມີຄວາມອີດູສົງສານຕໍ່ບາດແຜຂອງພຣະເຢຊູເຈົ້າຜູ້ຖືກຄຶງກາງເຂນຊຶ່ງພວກເຮົາສາມາດເຫັນໄດ້ໃນຜູ້ປະສົບໄພສົງຄາມ, ໃນຜູ້ທີ່ເສຍຊີວິດຕັ້ງແຕ່ໃນທ້ອງແມ່ຈົນເຖິງຜູ້ອາວຸໂສເສຍຊີວິດພາຍໃຕ້ການທໍລະມານໃນຫລາຍຮູບແບບ, ໄພທຳມະຊາດ, ການນຳໃຊ້ວັດຖຸດິບທີ່ບໍ່ຖືກຕ້ອງໃນໂລກ, ການຄ້າມະນຸດໃນທຸກຮູບແບບ ແລະການຊອກຫາຜົນປະໂຫຍດເງິນຄຳຢ່າງບໍ່ຈົບສິ້ນຈົນກາຍເປັນພຣະເທັດທຽມໃນຊີວິດ.

ໃນທຸກວັນນີ້ກໍເຊັ່ນດຽວກັນ, ພວກເຮົາຕ້ອງໄດ້ຮ້ອງຂໍຄວາມຊ່ວຍເຫລືອຈາກຜູ້ທີ່ມີໃຈກວ້າງຂວາງເພື່ອຊ່ວຍເຫລືອຜູ້ທີ່ຂັດສົນຜ່ານການກຸສົນ. ສິ່ງນີ້ປຽບເໝືອນການປະກອບສ່ວນເຂົ້າໃນການເສີມສ້າງໂລກຂອງພວກເຮົາໃຫ້ມີຄວາມສະເໝີພາບຫລາຍຂຶ້ນ. ການແບ່ງປັນດ້ວຍຄວາມຮັກທຳໃຫ້ມະນຸດມີຄວາມເປັນຄົນຫລາຍຂຶ້ນ. ສ່ວນການສະສົມໄວ້ເພື່ອຕົວເອີງເທົ່ານັ້ນທຳໃຫ້ມະນຸດເປັນຄົນຂາດຄວາມຮູ້ສຶກແລະເຫັນແກ່ຕົວ. ພວກເຮົາຈຳເປັນຕ້ອງກ້າວເດີນໄປໃຫ້ໄກໃນດ້ານມິຕິໂຄງສ້າງຂອງເສດຖະກິດ. ດ້ວຍເຫດນີ້, ໃນກຳນົດບຳເພັນສົບປີ 2020 ນີ້, ແຕ່ວັນທີ 26 ຫາ 28 ມີນາ, ຂ້າພະເຈົ້າຈະເຕົ້າໂຮມບັນດານັກເສດຖະກິດໜຸ່ມ, ຜູ້ບໍລິຫານແລະນັກວິຊາການດ້ານການຄ້າເພື່ອໃຫ້ພວກເຂົາໄດ້ປະກອບສ່ວນເຂົ້າໃນການເສີມສ້າງເສດຖະກິດໃຫ້ມີຄວາມຍຸດຕິທຳຫລາຍຂຶ້ນໃນສັງຄົມປັດຈຸບັນ. ດັ່ງທີ່ໄດ້ກ່າວຫລາຍຄັ້ງໃນເອກະສານຂອງພຣະກຣິສຕະຈັກວ່າ: “ການເມືອງເປັນຄວາມຮັກທີ່ສູງສົ່ງທີ່ສຸດ” (ໃນບົດຄວາມເຖິງສະມາຊິກສະຫະພັນວິທະຍາໄລກາໂທລິກແຫ່ງເມືອງອີຕາລີ ໂດຍພຣະສັນຕະປາປາປີໂອທີສິບເອັດ, ວັນທີ 18 ທັນວາ 1927). ເພື່ອການບໍລິຫານເສດຖະກິດຈະໄດ້ມີພື້ນຖານບົນຈິດຕະລົມຂອງພຣະວໍລະສານແລະຈິດຕະລົມຂອງບຸນມະຫາລາບແປດປະການຕາມຄຳເທດສອນຂອງພຣະເຢຊູເຈົ້າ.

ສຸດທ້າຍ, ຂ້າພະເຈົ້າວອນຂໍນຳແມ່ພຣະມາຣີອາສຳລັບກຳນົດບຳເພັນສົບທີ່ຈະມາເຖິງນີ້ ເພື່ອພວກເຮົາຈະໄດ້ຕ້ອນຮັບສຽງຮຽກເອີ້ນຂອງພຣະເຈົ້າວ່າ: “ຈົ່ງຄືນດີກັບພຣະເຈົ້າເຖີດ”. ເພື່ອພວກເຮົາຈະໄດ້ເພັ່ງຊົມຢ່າງສຸດຈິດໃຈທຳລ້ຳເລີກປາສກາ ອັນຈະທຳໃຫ້ພວກເຮົາກັບຄືນມາປາກເວົ້າກັບພຣະເຈົ້າຢ່າງເປີດເຜີຍແລະຈິງໃຈ. ດັ່ງນີ້, ພວກເຮົາຈະໄດ້ກາຍເປັນລູກສິດດັ່ງທີ່ພຣະເຢຊູເຈົ້າປາດຖະໜາຄື: “ເປັນເກືອຂອງແຜ່ນດິນແລະແສງສະວ່າງຂອງໂລກ” (ມທ 5, 13-14).

ພຣະສັນຕະປາປາຟັງຊິສໂກ<br>
ທີ່ໂຣມາ, ໃກ້ກັບອາດສະໜາວິຫານນັກບຸນຢວງແຫ່ງລາທັງ<br>
ວັນທີ 7 ຕຸລາ 2019<br>
ວັນສະຫລອງແມ່ພຣະແຫ່ງສາຍປະຄຳປະເສີດ<br>
ແປບົດໂດຍ: ຄຸນພໍ່ ອັງຕວນ ກຽດຕິສັກ